ນິທານ

# ນາງແຕງອ່ອນ



ເຫຼັ້ມທີ 2

12.000

# ພື້ນບາງແຕງອ່ອນ

## ເຫລັ້ມ ໔

ພິມທີ່ : ວິສາຫະກິດໂຮງພິມສຶກສາ
ທ.ບ 52 ພຈ/06042004
ຈຳນວນ : 2.000 ຫົວ

ຫໍສະຫມຸດແຫ່ງຊາດ

2004

# ພື້ນບາງແຕງອ່ອນ

ບັນນາທິການ : ກິງເດືອນ ເນດຕະວົງ
ກວດແກ້ອັກສອນ : ບຸນເລີດ ທຳມະຈັກ
ຈັດໜ້າຄອມພິວເຕີ : ບົວສີ ສີປະເສີດ

ພິມທີ່ ວິສາຫະກິດໂຮງພິມສຶກສາ

ພິມຄັ້ງທີນຶ່ງ : 1967
ພິມຄັ້ງທີສອງ : 2004

ຈຳນວນ 2.000 ສະບັບ

ຫໍສະໝຸດແຫ່ງຊາດ
ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ

# ພື້ນບາງແຕງອ່ອນ
# ເຫລັ້ມ ໔

ບັດນີ້ຈັກກ່າວເຖິງພຣະຣັດສີເຈົ້າ ກຸມພາທຽວທ່ອງ ກ່ອນແລ້ວ ພຣະກໍຫາລູກໄມ້ ທັງມື້ຄ່ຳຈວນ ແລ້ວລ່ວງລ້ຳ ຄືນທີ່ອາສົມ ພຣະກໍແກວງສຽງ ຮຽກເຮວຫານ້ອງ ມາເຢີກອງແພງແກ້ວ ນາງຊີນ້ອງພີ່ກູເອີຍ ພຣະພີ່ມາຮອດແລ້ວ ນາງແກ້ວຢູ່ໃສ ພີ່ເດ ເຈົ້າຣີບມາຮັບອ້າຍ ຫນັກເມື່ອຍມົວຕາ ແຫ້ນາ ພີ່ກໍເດີນໄພຫນາ ບໍ່ສະບາຍທັງມື້ ພຣະກໍຮຸນແຮງເອີ້ນ ຫານາງອິດອ່ອນ ບໍ່ຍິນສຽງຕ່ອນຕີ້ ນາງນ້ອຍງຽບເຢັນ ອັນວ່າຕາໂສເຈົ້າ ຄະນຶງໃຈມີມາກ ປານນີ້ນາງໄປເກັບດອກໄມ້ ຕີນຕ້າຍທ່ຽວຕາຍ ບໍ່ຢ່າແລ້ວ ແຕ່ນັ້ນຕາປະໂສເຈົ້າ ທັນຢ້າເຮວຣີບ ເຈົ້າກໍຜັນຖີບເທົ້າ ເຖີງແທ້ ທີ່ນາງ ໄປຮອດຫ້ອງ ຫົນແຫ່ງນາງເຊົາ ຕາຫລຽວຫາ ເຫລືອດມອງຂວາຊ້າຍ ພໍປະມານໄດ້ ແຮງມານ້ອຍນຶ່ງ ແລ້ວຈິ່ງລຸກຍ່າງຍ້າຍ ຫານ້ຳອາບສົງ ເຈົ້າກໍຄອງຫານ້ອງ ຊີຂາວ ຫນັກເຫນື່ອຍ ເສັຽແລ້ວ ພໍ່ເມື່ອແສງຄ່ຳຄ້ອຍ ມົວໄມ້ມືດດົງ ອັນວ່າ ທົງທຳເຈົ້າ ຣັດສີສິນຄະນຶງມາກ ກໍຫາກຜິດປລາດແທ້ ປານນີ້ບໍ່ມານີ້ເດ ຄວນກູໄປຫາເອີ້ນ ນຳນາງດູກ່ອນ ຫລອນວ່າໄປທ່ຽວຫລົ້ນ ດົງກວ້າງຄວ່າຫລົງ ບໍ່ຮູ້ ແຕ່ນັ້ນອົງຣັດສີເຈົ້າ ເຮວຣີບພະລັນໄປ ເຖີງກາງໄພ ຮຽກຫານາງແກ້ວ ບໍ່ໄດ້ຍິນສຽງເຈົ້າ ນາງງາມສະຫງັດຢູ່ ອັນວ່າຜູ້ທີ່ເຫງົ້າ ຣັດສີເຈົ້າຫງ່ວມເຫງົາ ພຣະກໍເອົາຕີນເຂົ້າ ໄພພະນອມນຳກູກ ໄປນັ້ນ ຕລອດທັງແວ່ເງື້ອມ ແຖວໄມ້ຮຽກຫາ ກໍບໍ່ຜາກົດແທ້ ສຽງຄົນຂານຕອບ ທີ່ໃດນັ້ນ ພຣະກໍເຫາະຫອບເຕັ້ນ ຄືນນັ້ນທ່ຽວຫາ

ທຸກຂອກຫ້ວຍ ເຫັວຮ່ອມວັງຮີ ຈອມຄີຣີ ຊອກຫານາງແກ້ວ ກໍຫາກ ຮຸນແຮງແລ້ວ ຫານາງໃນປ່າ ເຈົ້າກໍຮ້ອງຮ່ຳໄຫ້ ຫານ້ອງຮ່ຳໄຮ ໂອນໍເວນໃດເດ່ ມາໄກພັດພາກ ກັນນີ້ ຫາກວ່າທຸກນຶ່ງແລ້ວ ຊິແຖມ ຊ້ຳຕື່ມສອງ ແລະນໍ ອັນນຶ່ງລືວ່າເສືອສາງຊ້າງ ຄະນາຫມີເຫມືອຍປ່າ ຫລືວ່າຜີຮ່າຮ້າຍ ກິນແລ້ວຍອດນາງ ນັ້ນລື ກໍບໍ່ເຫັນຮອຍແຫ້ ໄຫຼນອງ ເລືອດເຮັ່ງ ທີ່ໃດນັ້ນ ອັນວ່າສິ້ນເສື້ອຜ້າ ເຫລືອໄວ້ກໍບໍ່ມີ ອັນນຶ່ງຮູ້ວ່າ ຫັດສະດີລິງຜ້າຍ ເວຫາຫຍູມຄາບ ໄປລື ລືວ່ານາຄະເຣດຮ້າຍ ເອົາເຈົ້າ ຈຸ່ມວັງ ນັ້ນເດ ກໍບໍ່ມີຕ່າງແຫ້ ທາງທ່າຫຽວລົງ ເລີຍບໍ່ເຫັນຮອຍຕີນ ໄຕ່ລົງຄີມນ້ຳ ຮູ້ວ່າຜີມານອ້າມ ໄພສົບມາຮອດ ເອົາຍອດແກ້ວ ແພງລ້ານດ່ວນຫນີ ນັ້ນລື ກໍບໍ່ຮູ້ແຫ່ງຫ້ອງ ຫາຊອກອິດແຄວນ ຍິ່ງແລ້ວ ກໍຫາກຮຸນແຮງຫິວ ທ່ຽວຫານາງແກ້ວ ພຣະຈິງຄືນມາຫ້ອງ ໂຮງທຳ ຂອງເກົ່າ ເຈົ້າກໍເຊທ່າວລົ້ມ ວິນສະມ້ອຍເມື່ອຍລົງ ຫັ້ນແລ້ວ ແຕ່ນັ້ນ ພໍຄາວແລ້ວ ຄອງສະຕິລຸກນັ່ງ ທັງເລົ່າຍັ່ງໆໄຫ້ ຫານ້ອງບໍ່ເຊົາ ໂອນໍ ເວນໃດນໍ ເຖິງກູຂ້ຽວຂຸ່ນ ສັນນີ້ ຊູມື້ນ້ອງກໍອອດໆເວົ້າ ນຳອ້າຍນັ່ງທຳ ແຫ້ນາ ບັດນີ້ນ້ອງເລົ່າປະພີ່ໄວ້ ຫນີໄປຕາຍຈາກ ເສັຽນໍ ນ້ອງຫາກ ພາກພີ່ໄວ້ ດົງກວ້າງຜູ້ດຽວ ແທ້ນໍ ຄ້ອມວ່າພຣະຈິ່ມແລ້ວ ຄ່ອຍນັ່ງ ພາວະນາ ທົງຫວງທຸກ ຢູ່ດຽວຫມອງໝ້ອມ ຈອມໃຈສ້າງ ສືນທຳ ເຊົ້າຄ່ຳ ຍັງເລົ່າຄຶດຮອດນ້ອງ ນົງຫນ້າບໍ່ລືມ ເທື່ອນີ້ຫມົດບົດນັ້ນ ກຸມພາທຸກຂະເວດ ໄວ້ແຕ່ພໍສ່ຳນີ້ ຖວາຍໄທ້ທີ່ຄວນ ກ່ອນແລ້ວ.

## ບັ້ນພຣະອິນອົງບອກໃຫ້ທ້າວພາດສຸຣິຍົງຍານບ້ານເອົາເມຍ

ບັດນີ້ຈັກກ່າວຈາເຖິງຫ້ອງ ອິນທາເທວະຣາດ ກ່ອນແລ້ວ ຍາມນັ້ນ ຄວັນມືດກຸ້ມ ເຖິງເຈົ້າເທບພະອິນ ພຣະຈິ່ງຫລິງແລຢ້ຽມ ລົງມາພາຍລຸ່ມ

ກໍຈຶ່ງເຫັນບາດນ້ອຍ ໄປລ້າງຄວງມານ ພຣະກໍເຫລືອໃຈແທ້ ມະໂນອັນ ຈິດບ່າ ອິນກໍຮ້ອນເຮົ່ງຂ້ຽວ ຈໍານ້ອງດ່ວນລົງ ເຈົ້າຈຶ່ງປບອກທ້າວ ພຣະເກດສຸຣິຍົງ ຈໍາອົງຂຽວ ສືບເອົາຢ່າຊ້າ ຄືນມາຫ້ອງ ສະເຫວີຍ ເມືອງທົງແທ່ນ ເຈົ້າຢ່າຊ້າ ທະຍານລ້ຳລ່ວງລົງ ນ້ອງເອີຍ ແຕ່ນັ້ນຫັດ ສະໄບເຈົ້າ ເທເວດລົງເປືອງ ເຖິງຈອມເມືອງ ຮອດປາວປາງແກ້ວ ຫັດສະໄບເອົ້າ ເຖິງບາບິນບອກ ເລົ່າເຫດໃຫ້ ບາຮູ້ຮ່າງການ ອ້ອຍນີ້ ຊື່ວ່າຫັດສະໄບທ້າວ ເທເວດແນວອິນ ເປັນທິຕາ ແທ່ງອິນອົງເຈົ້າ ມາບອກເຈົ້າ ຮູ້ຮ່າງຜໍປະມານ ອ້ອຍກໍເຫັນບາງຄານ ຢູ່ປາວປາງເສື້ອ ອັນວ່າສີໃສແກ້ວ ມາດາຕົນແມ່ ບານັ້ນ ບາງກໍທຸກຍາກຮ້າຍ ຂລັງແຄ້ນ ຄັ່ງຫວງ ບາງກໍໄປຕົກກ້ຳ ອົງເຂດເມືອງຜີ ຊື່ວ່ານັບທະພານຂວາງ ເຂດມານສວງເສື້ອ ອັນວ່າຫັດຖະຈັກທ້າວ ຂຸນມານລັກລອບ ມັນຈອບໄດ້ ບາງແກ້ວດ່ວນໜີ ເຈົ້າເອີຍ ແຕ່ນັ້ນພູມີໄດ້ ຍິນຄໍາຮ້ອນເຮົ່ງ ບາເຄັ່ງ ຂ້ຽວ ຖາມຊັ້ນຊອງທາງ ອັນວ່ານັບທະພານຫ້ອງ ຫົນໃດແດນທິບ ໃດນັ້ນ ຂໍໃຫ້ເທເວດທ້າວ ແພຮູ້ຮ່າງທາງ ແດ່ຖ້ອນ ແຕ່ນັ້ນຫັດສະໄບທ້າວ ໄຂກອນບິນບອກ ໃຫ້ເຈົ້າໄປຊື່ນີ້ ຢ່າເວັ້ນຜິກທາງ ແທ້ເນີ ໃຫ້ເຈົ້າລອດ ຫນ່ວຍແກ້ວ ໃສສ່ອງດາວພຣະກາຍ ຫາກຈັກເຫັນເມືອງມານ ດັ່ງໃຈ ຈົງອ້າງ ຄ້ອມບອກແລ້ວ ລາຈາກອົງກະສັດ ພຣະກໍເດີນເວຫາ ທອບທະ ຍານຜັນຜ້າຍ ເລີຍລ່ວງລ້ຳ ເຖິງຍອດດາວະດຶງ ເຖິງວິມານຕົນ ແທ່ນຄໍາລາຍລ້ອມ ກໍຫາກບໍຣະບວນນັ້ນ ຫັດສະໄບລົງບອກ ແລ້ວທໍ່ນີ້ ຖວາຍໄທ້ທີ່ຄວນ ກ່ອນແລ້ວ.

# ບັ້ນທ້າວເກດສຸຣິຍົງຍານໄປນຳຫາແມ່

ບັດນີ້ຈັກກ່າວເຖິງເກດສຸຣິຍົງຍານເຈົ້າ ຄະນຶງການຮ້ອນເຮ່ງ ກ່ອນແລ້ວ ທ້າວກໍໄຫວ້ແມ່ລ້ຽງ ນາງແກ້ວຍອດສວັນ ເທື່ອນີ້ລູກກໍຮ້ອນເຮັ່ງອ້ຽວ ເຖິງແມ່ມາດາ ເພາະເພິ່ນມີເວຣາ ຈ່ອງຈູງຈຳໃຊ້ ລູກຈັກໜີໄກເຈົ້າ ຈອມຄຸນພຣະແມ່ ກ່ອນແລ້ວ ຈັກໄດ້ເດີນດຸ່ງດັ້ນ ດອມແກ້ວແມ່ຕົນ ຖ້າບໍ່ໄດ້ຍອດແກ້ວ ຕົນແມ່ມາເມືອງ ເມື່ອໃດ ລູກຈັກທວນສິງຄາມ ຕ່າງແຂວງອໍໄດ້ ແຕ່ນັ້ນນາງກະສັດໄທ້ ຖະແຫລງຄຳບິນບອກ ຍັກນີ້ດີຂນາດແທ້ ຈອມເຈົ້າຢ່າລາ ແມ່ເນີ ອັນວ່າພຣະຂັນສິນກ້າ ແສງສອນອັນປະເສີດ ເຈົ້າແມ່ທຽມແທບຂ້າງ ເອົາໄວ້ຢ່າວາງ ແມ່ເນີ ອັນນຶ່ງຍາມເດີນດ້າວ ດາລະວັງແວນຖີ່ ຍັກນັ້ນເດີນດຸ່ງດັ້ນ ຫາເນື້ອຊູວັນ ແມ່ແລ້ວ ໃຫ້ເຈົ້າເອົາຜີເສື້ອ ຮັກສາເມືອງໄປເພື່ອນ ພໍປາກຕ້ານ ດອມທ້າວເພື່ອນທາງ ລູກເອີຍ ອັນນຶ່ງຢ່າໄດ້ເຫລືອຜອກພົ້ນ ເຫັນແກ່ຄວາມນອນ ແມ່ເນີ ຄັນວ່າເຂົາມາຫລອນ ເມື່ອນອນມິຮູ້ ຄັນວ່າບາຄານທ້າວ ນອນລົງໃຫ້ຜີຢູ່ ຖ້າວ່າຜີເມື່ອຍແລ້ວ ບາທ້າວຢູ່ຍາມ ແມ່ເນີ ອັນນີ້ແມ່ສັ່ງເຈົ້າໃຫ້ ເຈົ້າຈື່ຈຳເອົາ ຢ່າໄດ້ມົວເມົາຫລັບ ບໍ່ດີ ລະວັງໄວ້ ນາງກໍບາຍເອົາຜ້າ ພູສາຍໍຍື່ນ ໃຫ້ແຈ່ມເຈົ້າ ບາທ້າວເຂື່ອນແຂງ ແມ່ນວ່ມານຫລາຍລົ້ນ ເຫລືອອັກໂຂລ້ານຕື່ວ ກໍດີ ໃຫ້ເຈົ້າໄກວ່ແກວ່ງຜ້າ ຕາຍມ້ວຍບໍ່ຫລໍ ແທ້ແລ້ວ ກັບທັງມໍຣະກົດແກ້ວ ທຳມະໂລງລູກປະເສີດ ແມ່ກໍເອົາຍື່ນໃຫ້ ບາທ້າວຜາບມານ ແມ່ນວ່າມານມາລ້ອມ ບາຄານລ້ານຕື່ວ ກໍດີຖ້ອນ ຢ່າໄດ້ຢຸດຢ່ອນຢ້ານ ມັນແທ້ທໍ່ໄຍ ລູກເອີຍ ແມ່ນວ່າມັນຈັກທຳລິດທີໃຫ້ ຕົວດຽວແສນຮູບ ກໍດີຖ້ອນ ຄັນວ່າມັນເຂົ້າໃກ້ ບາຍຖິ້ມ

ຖອດແຫວນ ແມ່ເນີ ຫາກຈັກບັງເກີດຂຶ້ນ ເປັນເຫດໄຟເຜົາ ຝູງຫມູ່ມານມົວມຸດ ຕຸ່ມຕາຍຫາຍສ້ຽງ ຄ້ອມວ່າແມ່ສັ່ງແລ້ວ ທ້າວເລົ່າອໍາລາບາກໍຍໍມືທູນ ຂາບນາງສວັນຟ້າ ບາຄານທ້າວ ປະດັບດີຕົກແຕ່ງພຣະຂັນສິນສອດຄ້ອງ ຄຣບຫມັ້ນຜູກແອວ ແລ້ວກໍບາຍເອົາແກ້ວທະນູສອນເຫລັ້ມປະເສີດ ທ້າວກໍຫົງຂີ່ວມ້າ ຜີເສື້ອລ່ວງຕາມ ແຕ່ນັ້ນກັບລະເຍດແກ້ວ ນາງເທບລີລາ ນາງກໍຄືນເມືອງສວັນ ຮ່ວມແບບພຣະອິນເຈົ້າ ນາງກໍຫາຍຄໍາເສົ້າ ໂສກາກັ້ນໂສກ ທໍ່ແຕ່ຄຶດຮອດທ້າວກຸມານນ້ອຍຜູ້ດຽວ ນາງກໍຫລິງລໍ່າຢ້ຽມ ສອງຫນໍ່ກະສັດຕາ ສອງກໍພາກັບເດີນ ປ່າໄພພະນອມໄມ້ ແລເຫັນຍອດຊໍ່ຊ້ອງ ຜາຕໍ່ລຽນຕໍ່ ແລເຢີສອງກໍພາກັບລັດ ເລັ່ງໄປປໍາໄປ້ ກໍຫາກວອຍຍໆຂ້າມ ພູສູງແສນງ່ອນຮອດຫ້ວຍນໍ້າ ເຊົາຫັ້ນສວ່າງແຄວນ ຄັນວ່າມີແຮງແລ້ວ ເຊົາແຄວນຄາວນຶ່ງ ນ້ອຍນຶ່ງໄດ້ ແຮງແລ້ວເລົ່າໄປ ກໍຈໍ່ງກາຍແດນດ້າວ ພູສູງຫລາຍຍ່ານ ເດັຽລະດາດກ້ອນ ຜາລ້ານລ່ວງກາຍ ຫລາຍວັນໄດ້ຫລາຍຄືນຄາວເຄັ່ງ ເດືອນນຶ່ງໄດ້ ຂຽວລ້ານລ່ວງໄປ ເລີຍເລົ່າເຖິງແຫ່ງຫ້ອງ ຂົງເຂດອິງຣັດສີ ຫາກແມ່ນຕາປະໂສສິມ ແຫ່ງລຸງບາທ້າວແຕ່ນັ້ນບາໄທທ້າວ ທັງຜີໄປຮອດ ຂາກໍແລຄ່ວງຄຸ້ມ ຣັດສີເຈົ້າຮຸ່ງເຮືອງດີແກ່ຍອດພຸ່ງພົ້ນ ແກມຊ່ອງຍາງສູງ ລາຍເຄືອເກາະກ່ຽວກັບເປັນຖ້ານອັນວ່າບາຄານທ້າວ ທັງຜີຫລິງລໍ່າ ໃຜຜູ້ມາກໍ່ສ້າງ ປາງແກ້ວປ່ຽວພອຍນີ້ເດ ຮ້ອຍທີ່ຍັກເຜດຮ້າຍ ຕົວຊີ່ກຸມພັນ ບໍ່ຢ່າແລ້ວ ມາຢູ່ກາງໄພສິນຈອບກິນຄິນໃບ້ ນັ້ນລື ຫລືວ່າປາງກະສັດໄທ້ ຕາປະໂສວິນັຍສູດມາຢູ່ສ້າງ ສິນແກ້ວນັ່ງທໍາ ນັ້ນລື ແຕ່ນັ້ນທ້າວກໍຜູກມ້າໄວ້ ຜີຢູ່ຮັກສາດີຄັນວ່າສັດຕູມາ ຢ່າວາງຕົວມ້າ ນ້ອງຈັກໄປປອງຢ້ຽມ ປາງທອງດູກ່ອນຈັກວ່າປາງເລີດລໍ້າ ມັນນັ້ນຊື່ລື ບໍ່ຮູ້ ແຕ່ນັ້ນເຫນືອຫົວເຈົ້າ ກຸມານເຢາະຍ່ອງ ທ້າວກໍຫລິງລໍ່າຢ້ຽມ ເຫັນຖ້ວນຊູ່ເຊິງ ອັນນີ້ເປັນຊາດຊັ້ນ

ແນວຫນໍ່ຊິງທັມ ແທ້ແລ້ວ ບາຄານຄຶດ ໃຄ່ໄຍຣັດສີເຈົ້າ ຄຶດໃຄ່ຄວນ ຫົວຫລົ້ນ ລອງຊົມຊ້ອຍຊື່ນ ໄຍຢອກເຈົ້າ ຣັດສີຫລົ້ນສວ່າງໃຈ ທ້າວຄຶດແລ້ວ ກົນເລດອຸບາຍ ຫລຽວຕາຫຼິງ ລ່ຳປາງດູຖ້ວນ ກໍຈິ່ງເຫັນ ຍັງໄມ້ ທັບດັງອີງຢູ່ ຊຸ້ນແນະໄວ້ ທາງເຂົ້າຂອກປະຕູ ບາກໍບາຍເອົາໄມ້ ມາຕີເຕາະຕ່ອຍ ຄ້ອນເທົ້າລົ້ມ ຣັດສີເຈົ້າຕື່ນຣົບ ແຕ່ນັ້ນອົງຣັດສີເຈົ້າ ໄຂຕູມາເບິ່ງ ທ້າວຣີບລີ້ ນອນສິ້ງເບິ່ງຣັດສີ ພຣະຣັດສີເຈົ້າ ຄະນຶງໃຈ ມີມາກ ຮ້ອຍວ່າຍັກຫມູ່ນັ້ນ ເອົານ້ອງແຫ່ງກູ ບໍ່ຢ່າແລ້ວ ເຈົ້າກໍໄປ ວຽນອ້ອມ ລຽບຂອກແຄມອາສົມ ພຣະກໍພູມໆສຽງ ອ່ານມົນວຽນອ້ອມ ທັງອະຣິອະແຣມພ້ອມ ຄາຖາດີໂອມອ່ານ ທ້າວກໍເຢາະຢ່ອງເຂົ້າ ສາລາ ກວ້າງລ່ຳແຍງ ກໍຈິ່ງເຫັນຫນັງກຽວ ຈຳມະຂັນປູ່ຢູ່ ພູວະນາດທ້າວ ທວາຍເປື້ອງປິ່ນເສັຽ ບາກໍເອົາເທິງປີ້ນ ລົງໄປໄວ້ລຸ່ມ ແລ້ວເລົ່າຫັກ ຟົດໄມ້ ຖົມແລ້ວເລົ່າຫນີ ແຕ່ນັ້ນພຣະຣັດສີເຈົ້າ ມາຮອດຫລີງດູ ກໍຈິ່ງເຫັນທັບດັງ ຕ່າງຕາຕົນເຈົ້າ ຄຶດວ່າຜີສວງເສື້ອ ທຳກົນການ ຫລອກ ມັນຫາກກິນນ້ອງແກ້ວ ຊິມາຊ້ຳຕື່ມກູ ແລະນໍ ຄ້ອມວ່າເຈົ້າ ຄຶດແລ້ວ ອົມເຜີກອົມສາ ອົມສວາຫະ ບໍ່ຫຼໍຕົງສຽງ ແລ້ວເລົ່າຄືນ ມາຫ້ອງ ສາລາຂ້ອງເກົ່າ ຈຳມະຂັນແປ່ປີ້ນ ເປັນຫນ້າປລາດໃຈ ໃຜຜູ້ເຮັດດັ່ງນີ້ ກົນເລດມາຍາ ມັນເລົ່າມາລວງໄຍ ແຫ່ງກູເປັນກະດໍ້ ມັນສັງຈອງຫອງແທ້ ໄຍກູດູຫມິ່ນ ເຮັດຜານແຜ້ ກູທ້າວນັ່ງທຳ ນີ້ເດ ຢ້ານແມ່ນປີສາດເສື້ອ ເອົາບາງລັກລອບ ໄປນັ້ນ ມັນຫາກຍັງບໍ່ແລ້ວ ຊິເອົາຊ້ຳແຫ່ງກູ ແລະນໍ ເອົາກໍເອົາສາທ້ອນ ໃຫ້ມັນສວ່າງທົ່ງທຸກ ຕາງໃຫ້ຕາຍນຳນາງ ສວ່າງກໍໃຈລາງແລ້ວ ແຕ່ນັ້ນບາຄານທ້າວ ຟັງຄຳຣັດສີຈົ່ມ ກໍຫາກດູປລາດແທ້ ບາທ້າວຮ່ຳຄະນຶງ ອັນນີ້ຫາກ ແມ່ນຣິສີເຈົ້າ ຕົນລຸງອ້າຍແມ່ ກູແລ້ວ ຍາມເມື່ອກູຢອກຫລົ້ນ ຣັດສີເຈົ້າ ຮ່ຳໄຮ ດັ່ງນີ້ ຄວນກູໄປຫາເຈົ້າ ອົງຣັດສີຖາມເຫດ ດູຖ້ອນ ຈັກວ່າດີ

ແລະຮ້າຍ ພາຍຫນ້າກໍໃຫ້ເຫັນ ຊອບແລ້ວ ແຕ່ນັ້ນບາຄານທ້າວ ປະນົມ ມືແລ້ວນັ່ງ ຫຍັບເອົ້າໃກ້ ຮັດສີເຈົ້າຟັ່ງເຟືອນ ອັນວ່າອົງຮັດສີເຈົ້າ ເຫັນບາຢ້ານສັ່ນ ດັ່ນໆໄຫ້ ກົວຢ້ານສັ່ນສາຍ ພຣະກໍກົວວາຍແທ້ ວົບພອງ ລຸກເຍືອກ ຄຶດຂະມ່າຢ້ານ ພຣະອົງເຈົ້າຮ່ຳໄຮ ມຶງຫາກເອົານ້ອງແກ້ວ ນາງບາດກູໄປ ຍັງບໍ່ສົມໃຈມຶງ ຊິຕ່າວເອົາກູຊ້ຳ ມຶງຫາກເປັນແນວເຊື້ອ ຜີມານມິເດດ ກັບເຜດພ້ຽງ ເປັນທ້າວຫລອກຫລອນ ມຶງຫາກເຫັນເຄີຍໄດ້ ຫຽວມາຫຍ້າມເກົ່າ ກູຫາກຮູ້ເຜດພ້ຽງ ຜີເທົ້າຊູ່ເຊີງ ຖ້ວນແລ້ວ ແຕ່ນັ້ນ ບາຄານຕ້ານ ຕາມການຕ້ານກ່າວ ບອກຂ່າວໃຫ້ ຮັດສີເຈົ້າຢ່າກົວ ພຣະເອີຍ ຂ້ານີ້ຫາກແມ່ນແນວນາມເຊື້ອ ອົງອາດໂພທິຍານ ລົງມາໃນ ສິງສານ ຜາບມານທັງຄ້າຍ ຂ້ານີ້ມີໃຊ່ແນວນາມເຊື້ອ ຜີມານກະ ທຳເຜດ ສັງແລ້ວ ບໍ່ໃຊ່ຜີເຜດເສື້ອ ສາງຮ້າຍຢ່າກົວ ພຣະເອີຍ ຂ້ານີ້ ແນວກະສັດໄທ້ ນະຄອນສີສະເຫວີຍຮາດ ພາຍພຸ້ນ ທີ່ວ່າປິດຕຸຮາດຮ້າຍ ຈຳໃຫ້ພາກເມືອງ ອັນວ່າມາດາຂ້າ ນາງງາມແຕງອ່ອນ ພໍ່ສັ່ງໃຫ້ ຕີຊ້ຳໄລ່ຫນີ ແທ້ແລ້ວ ຂ້າກໍຍັງອ່ອນນ້ອຍ ບໍ່ຮູ້ຮ່ອມທາງເດີນ ກໍຫາກເນີນ ນານເທີງ ຖ່າຍຣະດູດິນໄດ້ ຈິນວ່າສັງຂານຂ້າມ ຣະດູເດືອນແຖມຖາຍ ມານັ້ນ ແປດຂວບເອົ້າ ຣະດູໄດ້ຖ່າຍມາ ນີ້ແລ້ວ ບັດນີ້ເທເວດເຈົ້າ ຕົນຊື່ທັດສະໄນ ລົງມາໄຂອາການ ບອກຄວາມພໍ່ຮູ້ ວ່າມີທັດຖະຈັກທ້າວ ນັນທະພານແດນທີບ ມາລັກດັ້ນ ເອົາແກ້ວແມ່ໄປ ວ່ານາ ນາງກໍຕົກ ເຂດຫ້ອງ ທີບແທ່ງມໍຣະໂຄ ຊື່ວ່ານັນທະພານຂວາງ ເຂດມານສວງເສື້ອ ຂ້າຈິ່ງທົງຄຳແລ້ນ ມະໂນອັນຈິດບ່າ ກໍຈິ່ງຮ້ອນເຮັ່ງຂ້ຽວ ຂຽວລ້ານ ລ່ວງມາ ນີ້ແລ້ວ ເມື່ອນັ້ນອົງຮັດສີເຈົ້າ ຟັງພາກບາຖະແຫລງ ຫາກແມ່ນແນວນາມເຮົາ ກໍ່ງພົງພັນເຊື້ອ ອົງຮັດສີເຈົ້າ ຍິນດີຊົມຊື່ນ ເຈົ້າຫາກເປັນຊາດຊັ້ນ ຫລານຫລ້າລູກລຸງ ແທ້ແລ້ວ ອັນວ່າກະສັດຕີ ແກ້ວ ນາງງາມແຕງອ່ອນ ນາງຫາກແມ່ນນ້ອງຫລ້າ ເຮົາແທ້ທ່ຽງຈິງ

# ຂໍໂທດຫຼາຍໆ

ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...



ດ້ວຍຄວາມຮັກແພງ